**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມປ່າໄມ້

5831

ເລກທີ:................/ກປມ
ນະຄອນຫລວງວຽງຈັນ, ວັນທີ: 25 NOV 2025

# ໜັງສືແຈ້ງເຊີນປະມູນ

ເຖິງ: ບັນດາບໍລິສັດທີ່ຈຳໜ່າຍເຄື່ອງໄອທີ ແລະ ຄອມພິວເຕີ

ເລື່ອງ: ເຂົ້າຮ່ວມປະມູນຈັດຊື້ ແລະ ສະໜອງເຄື່ອງອຸປະກອນໄອທີ ສຳລັບວຽກສືບສວນ ສອບສວນ ບັງຄັບໃຊ້ກົດໝາຍ ຂອງໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ທຶນກູ້ຢືມຈາກທະນາຄານໂລກ ສຳລັບ ການຈັດຕັ້ງປະຕິບັດ ໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ ເຊິ່ງທາງ ໂຄງການໄດ້ຮັບອະນຸມັດງົບປະມານ ແລະ ມີຈຸດປະສົງນຳໃຊ້ ເຂົ້າໃນການປະມູນຈັດຊື້ ແລະ ສະໜອງເຄື່ອງອຸປະກອນໄອທີ ສຳລັບວຽກສືບສວນ ສອບສວນ ບັງຄັບໃຊ້ກົດໝາຍ ຂອງໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.
2. ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍຖືເປັນກຽດເຊີນ ບັນດາບໍລິສັດ ທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບ ການຈັດຊື້ ແລະ ສະໜອງເຄື່ອງອຸປະກອນໄອທີ ສຳລັບວຽກສືບສວນ ສອບສວນ ບັງຄັບໃຊ້ກົດໝາຍ ຂອງໂຄງການ ພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກ້ວາງ ພາຍໃນຕາມທີ່ໄດ້ກຳນົດໄວ້ ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017, ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຄູ່ມືແນະນຳ: ຂອງທະນາຄານໂລກ ວ່າດ້ວຍຫລັກການ ການຈັດຊື້ - ຈັດຈ້າງ ສຳລັບ ປະເທດຜູ້ກູ້ຢືມ (Procurement Regulations for IPF Borrowers), ສະບັບເດືອນ ກໍລະກົດ 2016 ການປະມູນແມ່ນເປີດໃຫ້ຜູ້ປະມູນທຸກໆບໍລິສັດ ທີ່ມີຄວາມເໝາະສົມ ຕາມບົດແນະນຳວ່າດ້ວຍການຈັດຊື້ - ຈັດຈ້າງ. ພ້ອມກັນນັ້ນໃຫ້ເບິ່ງຫຍໍ້ໜ້າ 3.15, 3.18 ແລະ 3.19 ທີ່ກຳນົດໄວ້ ໃນນະໂຍບາຍ ຂອງທະນາຄານໂລກ ວ່າດ້ວຍການມີຜົນປະໂຫຍດຊໍ້າຊ້ອນ.
4. ບໍລິສັດທີ່ມີຄວາມເໝາະສົມ ອາດຈະຂໍຂໍ້ມູນເພີ່ມເຕີມ ຫຼື ຂໍເອກະສານປະມູນ ຈາກໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ໃນເວລາໂມງລັດຖະການແຕ່ 08:00 ຫາ 16:00 ໂມງ ຕາມທີ່ຢູ່ຂ້າງລຸ່ມນີ້.
5. ບໍລິສັດທີ່ມີຄວາມເໝາະສົມ ສາມາດຕິດຕໍ່ພົວພັນຮັບເອກະສານປະມູນຄົບຊຸດເປັນພາສາລາວ ໂດຍຍື່ນໜັງສືຫາທີ່ຢູ່ຂ້າງລຸ່ມນີ້.
6. ຊອງປະມູນຈະຕ້ອງສົ່ງຫາບ່ອນຢູ່ຂ້າງລຸ່ມນີ້ 10:30 ໂມງ, ວັນທີ 14 ມັງກອນ 2026 . ການສົ່ງເອກະສານປະມູນດ້ວຍລະບົບເອເລັກໂຕຼນິກຈະບໍ່ອະນຸຍາດ. ຊອງປະມູນທີ່ສົ່ງຊ້າຈະຖຶກປະຕິເສດ. ຊອງປະມູນຈະເປີດໃນເວລາ 9:00 ໂມງ ຂອງມື້ດຽວກັນ. ການເປີດຊອງປະມູນຈະເປີດຕໍ່ໜ້າສາທາລະນະໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈຢາກເຂົ້າຮ່ວມຢູ່ສະຖານທີ່ໆກຳນົດໄວ້ຂ້າງລຸ່ມນີ້.
7. ທຸກໆເອກະສານຈະຕ້ອງປະກອບແຈ້ງການຄໍ້າປະກັນການປະມູນດ້ວຍກຽດ.
8. ທ່ານສາມາດຕິດຕໍ່ພົວພັນ ແລະ ສອບຖາມຂໍ້ມູນເພີ່ມເຕີມໄດ້ທີ່ ໂຄງການພູມີທັດ ແລະ ຊີວິດການເປັນຢູ່ ໃນ ສປປ ລາວ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ບ້ານສີສະເກດ, ຄຸ້ມທາດດຳ, ເມືອງຈັນທະບູລີ, ນະຄອນຫລວງວຽງຈັນ. ຕິດຕໍ່ພົວພັນ ທ່ານ ນາງ ຍົມມາລາ ແພງສຸວັນ ຜູ້ປະສານງານໂຄງການ ໄດ້ທີ່ ໂທລະສັບ: (+856) 20 28227153 ອີເມວ: phyommala@gmail.com

**ຫົວໜ້າກົມ**

ກົມປ່າໄມ້

**ສົມບູນ ເລັ່ງສະຫວັດ**